*Journal of Science and Teacher Education (JLSTE), 2*(1), 61-68
**P-ISSN**: 3078-5405; **E-ISSN**: 3080-2628

# ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາຂອງໂຮງຮຽນມັດທະຍົມສຶກສາຕອນປາຍສົງໃນນະຄອນຫຼວງວຽງຈັນ

*ແມັກກີ ສີວົງ*, ບົວພັນ ລືເດດມູນສອນ, ວັນນະສຸກ ບົວສັງທອງ*
*ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ*

**ບົດຄັດຫຍໍ້**

ການຄົ້ນຄວ້າໃນຄັ້ງນີ້ມີຈຸດປະສົງ ເພື່ອສຶກສາສະພາບການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາຂອງໂຮງຮຽນມັດທະຍົມສຶກສາຕອນປາຍສົງ ໂດຍມີກຸ່ມເປົ້າໝາຍແມ່ນຜູ້ບໍລິຫານ (ຄະນະອຳນວຍການ), ວິຊາການ ແລະ ຄູສອນ ຈຳນວນ 68 ອົງ/ທ່ານ ໃນໂຮງຮຽນມັດທະຍົມຕອນປາຍສົງ 2 ແຫ່ງໃນນະຄອນຫຼວງວຽງຈັນ. ການຄົ້ນຄວ້າຄັ້ງນີ້ ຜູ້ຄົ້ນຄວ້າໄດ້ກຳນົດກອບແນວຄິດຕາມ 6 ດ້ານຂອງມາດຖານການປະກັນຄຸນນະພາບການສຶກສາສາມັນ. ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນແມ່ນແບບສອບຖາມປະມານຄ່າ 5 ລະດັບ. ຂໍ້ມູນຖືກນຳມາວິເຄາະໂດຍໃຊ້ໂປຣແກຣມ SPSS ເພື່ອຊອກຫາຄ່າຄວາມຖີ່, ຄ່າສ່ວນຮ້ອຍ, ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ. ຜົນຂອງການຄົ້ນຄວ້າເຫັນວ່າ: ຜົນການວິເຄາະຂໍ້ມູນຕາມຄວາມຄິດເຫັນຂອງຄູສອນ ຕໍ່ກັບສະພາບການປະຕິບັດມາດຕະຖານການປະກັນຄຸນນະພາບໃນໂຮງຮຽນມັດທະຍົມສຶກສາສົງ ໂດຍລວມຢູ່ໃນລະດັບດີ ($\mu = 4.41$; $\sigma = 0.39$). ເມື່ອພິຈາລະນາແຕ່ລະດ້ານ ພົບວ່າດ້ານທີ່ສາມາດປະຕິບັດໄດ້ດີທີ່ສຸດແມ່ນ ດ້ານການຄຸ້ມຄອງ-ບໍລິຫານ ໂດຍສະເພາະແມ່ນຄວາມຮູ້ ແລະ ຄວາມສາມາດຂອງຜູ້ບໍລິຫານ. ເຖິງຢ່າງໃດກໍຕາມ ດ້ານທີ່ບໍ່ສາມາດເຮັດໄດ້ດີເທົ່າທີ່ຄວນແມ່ນດ້ານສະພາບແວດລ້ອມ ແລະ ດ້ານອຸປະກອນການຮຽນ-ການສອນ. ເມື່ອພິຈາລະນາແລ້ວເຫັນວ່າ ສິ່ງທ້າທ້າຍໃນດ້ານສະພາບແວດລ້ອມແມ່ນ ຄວາມສາມາດໃນການສົ່ງເສີມການອ່ານ, ໃນຂະນະທີ່ສິ່ງທ້າທ້າຍດ້ານອຸປະກອນການຮຽນ-ການສອນແມ່ນການຂາດແຄນອຸປະກອນຫ້ອງທົດລອງ ແລະ ອຸປະກອນຫ້ອງໄອຊີທີ (ICT).

***ຄຳສັບສຳຄັນ:*** *ການປະກັນຄຸນນະພາບ, ການສຶກສາ, ມັດທະຍົມສົງ*

**ຕິດຕໍ່ພົວພັນ: ແມັກກີ ສີວົງ; ໂທ: 020 29886920; ອີເມວ: seevongmaxkee@gmail.com*

**ຂໍ້ມູນບົດຄວາມ**
Received 4 December 2025
Received in revised form 17 January 2026
Accepted 20 January 2026

This is an open access article under the CC BY license (https://creativecommons.org/licenses/by/4.0/)

**P-ISSN**: 3078-5405; **E-ISSN**: 3080-2628

# An Investigation into the Implementation of Quality Assurance Standards at Buddhist Upper Secondary Schools in Vientiane Capital

*Maxkee SEEVONG*, Bouaphan LUEDETMOUNSORN, Vannasouk BOUASANGTHONG*

*Faculty of Education, National University of laos*

## Abstract

The purpose of this study is to examine the implementation status of the education quality assurance at the Buddhist upper secondary schools. The target group consisted of 68 participants, including administrators (the management committee), academic staff, and teachers from two upper secondary schools in Vientiane Capital. In this study, the researcher adopted a conceptual framework based on the six aspects of the general education quality assurance standards. The data collection instrument used was a five-point Likert scale questionnaire. The data were analyzed using statistical software to determine frequency, percentage, mean, and standard deviation. The findings revealed that, overall, administrators, academic staff, and teachers the implementation of the quality assurance standards in the upper secondary schools were at a high level ($\mu = 4.41$; $\sigma = 0.39$). When considering each aspect individually, it found that the most effectively implemented aspect was management and administration, particularly the administrators' knowledge and competence. However, the aspects that were less effectively implemented were the learning environment and teaching–learning materials. The study also found that the major challenge concerning the learning environment was the limited capacity to promote reading, while the main challenge regarding teaching–learning materials was the shortage of laboratory equipment and ICT facilities.

**Keywords:** *Quality assurance, Education, Buddhist secondary school.*

**ARTICLE INFO**

Received 4 December 2025
Received in revised form 17 January 2026
Accepted 20 January 2026

**Correspondence: Maxkee SEEVONG; Tel: 020 29886920;*
*Email: seevongmaxkee@gmail.com*

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ການສຶກສາມີບົດບາດສຳຄັນໃນການພັດທະນາປະເທດໂດຍໃຫ້ຄວາມຮູ້, ທັກສະ ແລະ ເປັນພົນລະເມືອງດີໃນສັງຄົມ. ໂຮງຮຽນມັດທະຍົມສຶກສາໄດ້ພົບກັບຄວາມຕ້ອງການທີ່ເພີ່ມຂຶ້ນໃນການປະຕິບັດຕາມມາດຕະຖານການປະກັນຄຸນນະພາບການສຶກສາ. ມາດຕະຖານເຫຼົ່ານີ້ ມີຄວາມຈຳເປັນ ເພື່ອໃຫ້ແນ່ໃຈວ່າການສຶກສາມີຄວາມເທົ່າທຽມ ແລະ ມີປະສິດທິຜົນ, ສົ່ງເສີມການເຕີບໂຕຂອງທັງບຸກຄົນ ແລະ ສັງຄົມ. ແຕ່ຢ່າງໃດກໍຕາມຄວາມທ້າທາຍໃນການປະຕິບັດຕາມມາດຕະຖານເຫຼົ່ານີ້ ຍັງຄົງມີຢູ່ເຊິ່ງເນັ້ນຢໍ້າເຖິງຄວາມຈຳເປັນໃນການກວດສອບປະເດັນນີ້ຢ່າງຖີ່ຖ້ວນ. ການປະກັນຄຸນນະພາບການສຶກສາໝາຍເຖິງ ຂະບວນການ ແລະ ມາດຕະການທາງລະບົບທີ່ມຸ່ງປະເມີນ ແລະ ປັບປຸງຄຸນນະພາບການສອນ, ການຮຽນຮູ້ ແລະ ການບໍລິຫານຈັດການໂຮງຮຽນໃນປະເທດລາວ. ກະຊວງສຶກສາທິການ ແລະ ກິລາ (MoES) ໄດ້ນຳຂອບເຂດວຽກງານຕ່າງໆມາໃຊ້ເພື່ອສ້າງມາດຕະຖານໃນການສົ່ງມອບວຽກງານການສຶກສາໃນໂຮງຮຽນຕ່າງໆ ໂດຍສອດຄ່ອງກັບມາດຕະຖານສາກົນ ແລະ ເປົ້າໝາຍການພັດທະນາແບບຍືນຍົງ (SDG) ໂດຍສະເພາະເປົ້າໝາຍທີ 4 ຊຶ່ງເນັ້ນທີ່ການສຶກສາທີ່ມີຄຸນນະພາບ (ກະຊວງສຶກສາທິການ ແລະ ກິລາ, 2022). ໂຮງຮຽນມັດທະຍົມສຶກສາໃນນະຄອນຫຼວງວຽງຈັນ ພາຍໃຕ້ຂອບການປະກັນຄຸນນະພາບແຫ່ງຊາດ ຊຶ່ງລວມເຖິງເກນຕ່າງໆເຊັ່ນ: ຄຸນສົມບັດຂອງຄູ, ຄວາມກ່ຽວຂ້ອງກັບຫຼັກສູດ, ໂຄງສ້າງພື້ນຖານ, ລະບົບການປະເມີນນັກຮຽນ ແລະ ການມີສ່ວນຮ່ວມຂອງຜູ້ມີສ່ວນໄດ້ສ່ວນເສຍ ແມ່ນໄດ້ມີວິທີການປະຕິບັດເຫຼົ່ານີ້ຢູ່, ເຊິ່ງໃນນັ້ນ, ແຕ່ລະໂຮງຮຽນຫຼາຍແຫ່ງ ຍັງໄດ້ປະສົບບັນຫາໃນການປະຕິບັດຕາມມາດຕະຖານ ເນື່ອງຈາກຊັບພະຍາກອນທີ່ມີຢ່າງຈຳກັດ, ການຝຶກອົບຮົມສຳລັບນັກການສຶກສາຍັງບໍ່ທົ່ວເຖິງ ແລະ ໂຄງສ້າງພື້ນຖານທີ່ບໍ່ພຽງພໍ. ການລາຍງານຂອງກະຊວງສຶກສາທິການ ແລະ ກິລາໃນການພັດທະນາການສຶກສາໃນປີ 2022 ໄດ້ລະບຸວ່າ ໂຮງຮຽນມັດທະຍົມສຶກສາກວ່າ 40% ໃນນະຄອນຫຼວງວຽງຈັນບໍ່ສາມາດບັນລຸຕົວຊີ້ວັດຄຸນນະພາບທີ່ສຳຄັນໄດ້. ຄວາມທ້າທາຍສຳຄັນທີ່ພົບໄດ້ແກ່: ເງິນທຶນບໍ່ພຽງພໍ, ການຂາດຄວາມສອດຄ່ອງລະຫວ່າງນະໂຍບາຍ ແລະ ວິທີທາງປະຕິບັດ, ລະດັບຄວາມຮູ້ ແລະ ຄວາມມຸ່ງໝັ້ນທີ່ແຕກຕ່າງກັນລະຫວ່າງຜູ້ບໍລິຫານໂຮງຮຽນ ແລະ ຄູ (ສຳນັກງານສະຖິຕິລາວ, 2021) ແຕ່ເຖິງຈະມີຄວາມສຳຄັນດັ່ງກ່າວ ການປະຕິບັດມາດຕະຖານຄຸນນະພາບການສຶກສາໂຮງຮຽນມັດທະຍົມຕອນປາຍສົງໃນນະຄອນຫຼວງວຽງຈັນຍັງໄດ້ພົບກັບຄວາມທ້າທາຍຫຼາຍຢ່າງ ເຊັ່ນ: ເງິນທຶນຂອງລັດຖະບານທີ່ມີຢ່າງຈຳກັດ ເຮັດໃຫ້ໂຮງຮຽນບໍ່ສາມາດປັບປຸງສິ່ງອຳນວຍຄວາມສະດວກ, ການຈັດຫາອຸປະກອນການສອນ. ນອກຈາກນີ້, ຄວາມແຕກຕ່າງລະຫວ່າງຊົນນະບົດ

ແລະ ຕົວເມືອງຍັງເຮັດໃຫ້ໂຮງຮຽນໃນພື້ນທີ່ທີ່ມີຊຸມຊົນຮັ່ງມີຍັງມີນ້ອຍ ມັກຈະຖືກຖິ້ມໄວ້ຂ້າງຫຼັງ, ຄູຍັງຂາດການຝຶກອົບຮົມທີ່ຈຳເປັນໃນການນຳໃຊ້ວິທີການສອນສະໄໝໃໝ່ ຫຼື ປັບຕົວໃຫ້ເຂົ້າກັບຂໍ້ກຳນົດໃນຫຼັກສູດໃໝ່. ໂອກາດໃນການພັດທະນາວິຊາຊີບສຳລັບຄູໃນ ສປປ ລາວ ຍັງມີຄວາມຈຳກັດ ອັນເຮັດໃຫ້ຄວາມພະຍາຍາມໃນການປະຕິບັດຕາມມາດຕະຖານຄຸນນະພາບມີອຸປະສັກຫຼາຍຂຶ້ນ. ຄວາມທ້າທາຍອີກປະການໜຶ່ງຄືການຂາດກົນໄກການຕິດຕາມ ແລະ ປະເມີນຜົນທີ່ມີປະສິດທິພາບ ເຖິງວ່າກະຊວງສຶກສາທິການໄດ້ກຳນົດນະໂຍບາຍແລ້ວກໍຕາມ ແຕ່ການບັງຄັບໃຊ້ທີ່ບໍ່ສອດຄ່ອງກັນ ແລະ ຄວາມສາມາດໃນການກຳກັບຕິດຕາມທີ່ມີຢ່າງຈຳກັດ ຊຶ່ງສົ່ງຜົນໃຫ້ເກີດຊ່ອງວ່າງລະຫວ່າງນະໂຍບາຍ ແລະ ການປະຕິບັດ (Phommalath, 2020).

ປະຈຸບັນ ມາດຕະຖານການປະກັນຄຸນນະພາບການສຶກສາໄດ້ຖືກກຳນົດຂຶ້ນ ເພື່ອປະເມີນຄຸນນະພາບໃຫ້ສອດຄ່ອງກັບຄວາມຕ້ອງການຂອງສັງຄົມ. ແຕ່ລະບຽບປະຕິບັດ ຫຼື ຂໍ້ກຳນົດດັ່ງກ່າວ ໃນການປະຕິບັດໃຫ້ເກີດຜົນສຳເລັດຢ່າງມີປະສິດທິພາບໃນການປະຕິບັດຕາມທຳມະທາງພຸດທະສາດສະໜາຂອງໂຮງຮຽນມັດທະຍົມສົງຍັງມີບັນຫາຢູ່ຫຼາຍຢ່າງ ຊຶ່ງເກີດຈາກຂໍຈຳກັດດ້ານຊັບພະຍາກອນ, ການກວດສອບ ຫຼື ຄວາມເຂົ້າໃຈໃນມາດຕະຖານຄຸນນະພາບທີ່ເຊື່ອມໂຍງກັບຫຼັກການທາງພຸດທະສາສະໜາ. ມາດຕະຖານການປະກັນຄຸນນະພາບເປັນສິ່ງສຳຄັນສຳລັບນັກບວດ ເພື່ອໃຫ້ມີຄວາມສາມາດພັດທະນາການຮຽນຮູ້ທີ່ມີປະສິດທິພາບ ຊຶ່ງລະບົບຄວບຄຸມຄຸນນະພາບການສຶກສາທາງສາດສະໜານັ້ນ ມີຫຼາຍມິຕິທີ່ມີສະເພາະ ສຳລັບພຣະສົງ-ສາມະເນນ ແລະ ຊຸມຊົນ. ຫາກມີບັນຫາເລື່ອງມາດຕະຖານເກີດຂຶ້ນອາດຈະສົ່ງຜົນໃຫ້ຄຸນນະພາບຂອງການສຶກສາຂອງໂຮງຮຽນຫຼຸດລົງ ລວມເຖິງລະບົບການປົກຄອງສະຖາບັນສົງໃນການພັດທະນາ ຫຼື ວິວັດທະນາການ ແລະ ຄວາມກ້າວໜ້າຂອງຄວາມຮູ້ຫຼຸດລົງ. ສະນັ້ນ, ການກວດສອບ ແລະ ການວິເຄາະບັນຫາການປະຕິບັດຕາມມາດຕະຖານຄຸນນະພາບໃນໂຮງຮຽນມັດທະຍົມສຶກສາສົງຕອນປາຍໃນນະຄອນຫຼວງວຽງຈັນເປັນສ່ວນສຳຄັນທີ່ຈະຊ່ວຍໃຫ້ໂຮງຮຽນສົງສາມາດພັດທະນາລະບົບເຮັດວຽກໃຫ້ຄອບຄຸມ ແລະ ທັນສະໄໝ (ຫ້ອງການກຳມາທິການສຶກສາສົງ, 2025). ຂໍ້ມູນທີ່ໄດ້ຈາກການປະເມີນໃນຮູບແບບຕ່າງໆນີ້ ເຫັນວ່າ ສະພາບມີຄວາມສຳຄັນ ແລະ ຈຳເປັນຫຼາຍຕໍ່ກັບການປະກັນຄຸນນະພາບການສຶກສາ. ອີກປະການໜຶ່ງ ສະພາບບັນຫາກໍຍັງບໍ່ເປັນທີຢືນຢັນຢ່າງຈະແຈ້ງ ຫຼື ເປັນຮູບປະທຳໄລຍະທີ່ຜ່ານມາ. ສະນັ້ນ, ຂໍ້ມູນທີ່ໄດ້ຈາກການວິເຄາະນັ້ນອາດຍັງບໍ່ທັນຄົບຖ້ວນສົມບູນພຽງພໍ ເພື່ອຈະນຳໄປເປັນບ່ອນອີງໃນການວາງແນວທາງປັບປຸງແກ້ໄຂຢ່າງກົງປະເດັ່ນ. ຈາກຂໍ້ມູນທີ່ກ່າວມາທັງໝົດນີ້ ຜູ້ຄົ້ນຄວ້າຈຶ່ງມີຄວາມສົນໃຈໃນການສຶກສາ ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາຂອງໂຮງຮຽນມັດທະຍົມສຶກສາຕອນປາຍສົງ ໃນນະຄອນຫຼວງວຽງຈັນເພື່ອນຳຜົນຂອງການສຶກສາໄປປະກອບສ່ວນເຂົ້າໃນການປັບປຸງ ແລະ ພັດທະນາໂຮງຮຽນມັດທະຍົມສຶກສາດັ່ງກ່າວໃຫ້ມີມາດຕະຖານຄຸນນະພາບຕາມຂໍ້ກຳນົດຂອງກະຊວງສຶກສາທິການ ແລະ ກິລາວາງອອກ.

### *1.2. ຄຳຖາມຂອງການຄົ້ນຄ້ວາ*

ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາທີ່ໂຮງຮຽນມັດທະຍົມສຶກສາຕອນປາຍສົງ ມີສະພາບເປັນຄືແນວໃດ?

### *1.3. ຈຸດປະສົງຂອງການຄົ້ນຄ້ວາ*

ເພື່ອສຶກສາສະພາບການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາລະດັບມັດທະຍົມສຶກສາຕອນປາຍສົງ ໃນນະຄອນຫຼວງວຽງຈັນ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ການສຶກສາຄົ້ນຄວ້າຄັ້ງນີ້ ແມ່ນກ່ຽວກັບການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາຂອງໂຮງຮຽນມັດທະຍົມສຶກສາສົງຕອນປາຍ ໃນນະຄອນຫຼວງວຽງຈັນ ໃນ 6 ດ້ານຄື: ດ້ານຜູ້ຮຽນ, ດ້ານການຮຽນ-ການສອນ, ດ້ານສະພາບແວດລ້ອມ, ດ້ານອຸປະກອນການຮຽນ-ການສອນ, ດ້ານການຄຸ້ມຄອງ-ບໍລິຫານ ແລະ ດ້ານການມີສ່ວນຮ່ວມຂອງຊຸມຊົນ. ຜູ້ສຶກສາໄດ້ສຶກສາບົດຄົ້ນຄວ້າທີ່ກ່ຽວຂ້ອງກັບບົດດັ່ງກ່າວ ທັງພາຍໃນ ແລະ ຕ່າງປະເທດ ເພື່ອນຳມາເປັນທິດທາງໃຫ້ແກ່ການສຶກສາ ແລະ ບັນດາຄົ້ນຄວ້າທີ່ກ່ຽວຂ້ອງມີດັ່ງລຸ່ມນີ້:

ລະດາວັນ ຕັ້ງມັ່ນ (2018) ໄດ້ຄົ້ນຄວ້າກ່ຽວກັບ ການດຳເນີນງານການປະກັນຄຸນນະພາບພາຍໃນສະຖານສຶກສາ ສັງກັດສຳນັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາ ເຂດ 4 ຈັງວັດປະທຸມທານີ ເຊິ່ງມີຈຸດປະສົງ: 1) ສຶກສາການດຳເນີນການປະກັນຄຸນນະພາບພາຍໃນສະຖານສຶກສາ ແລະ 2) ຫາແນວທາງການພັດທະນາການດຳເນີນການປະກັນຄຸນນະພາບພາຍໃນສະຖານສຶກສາ ສັງກັດສຳນັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາ ເຂດ 4 ຈັງວັດປະທຸມທານີ. ກຸ່ມຕົວຢ່າງທີ່ໃຊ້ໃນການຕອບແບບສອບຖາມ ໄດ້ແກ່: ຄູໃນສະຖານສຶກສາສັງກັດສຳນັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາ ເຂດ 4 ຈັງວັດປະທຸມທານີ ທີ່ປະຕິບັດໜ້າທີ່ປະຈຳປີສົກຮຽນ 2018 ຈຳນວນ 367 ຄົນ. ຜົນການຄົ້ນຄວ້າພົບວ່າ: ການດຳເນີນງານການປະກັນຄຸນນະພາບພາຍໃນສະຖານສຶກສາ ສັງກັດສຳນັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາ ເຂດ 4 ຈັງວັດປະທຸມທານີ ຢູ່ໃນລະດັບຫຼາຍ.

ອຸ່ນລາ ພາວົງໄຊ (2018) ໄດ້ຄົ້ນຄວ້າກ່ຽວກັບ ການປະຕິບັດມາດຕະຖານການປະກັນຄຸນະພາບຂອງໂຮງຮຽນມັດທະຍົມສຶກສາ ພາກເອກະຊົນ 4 ເມືອງໃນຂອງນະຄອນຫຼວງວຽງຈັນ ເຊິ່ງມີຈຸດປະສົງ: 1). ສຶກສາບັນຫາຂອງການປະຕິບັດມາດຕະຖານການປະກັນຄຸນະພາບຂອງໂຮງຮຽນມັດທະຍົມສຶກສາ ພາກເອກະຊົນ 4 ເມືອງໃນຂອງນະຄອນຫຼວງວຽງຈັນ. 2) ປຽບທຽບຄວາມຄິດເຫັນຂອງຜູ້ອຳນວຍການ ແລະ ຄູສອນ ກ່ຽວກັບການປະຕິບັດມາດຕະຖານການປະກັນຄຸນະພາບຂອງໂຮງຮຽນມັດທະຍົມສຶກສາ ພາກເອກະຊົນ 4 ເມືອງໃນຂອງ

ນະຄອນຫຼວງວຽງຈັນ ແລະ 3) ຊອກຫາຂໍ້ສະເໜີແນະຈາກຜູ້ອໍານວຍການ ແລະ ຄູຕໍ່ການປັບປຸງວິທີການຈັດຕັ້ງປະຕິບັດຕາມມາດຕະຖານການປະກັນຄຸນະພາບຂອງໂຮງຮຽນມັດທະຍົມສຶກສາ ພາກເອກະຊົນ 4 ເມືອງໃນຂອງນະຄອນຫຼວງວຽງຈັນ, ຜົນການຄົ້ນຄວ້າພົບວ່າ: 1) ຄວາມຄິດເຫັນຂອງຜູ້ບໍລິຫານ ແລະ ຄູສອນ ກ່ຽວກັບການປະຕິບັດຂອງຜູ້ອໍານວຍການ ແລະ ຄູສອນກ່ຽວກັບການຈັດຕັ້ງປະຕິບັດມາດຕະຖານການປະກັນຄຸນະພາບຂອງໂຮງຮຽນມັດທະຍົມສຶກສາ ພາກເອກະຊົນ 4 ເມືອງໃນຂອງນະຄອນຫຼວງວຽງຈັນ ທັງ 6 ດ້ານໂດຍລວມແມ່ນມີບັນຫາຢູ່ໃນລະດັບປານກາງ. ມະຍຸຣີ ອໍລະວັນ (2020) ໄດ້ຄົ້ນຄວ້າກ່ຽວກັບແນວທາງການພັດທະນາການດໍາເນີນງານປະກັນຄຸນນະພາບການສຶກສາຂອງໂຮງຮຽນມັດທະຍົມວັດໜອງແຂມ ເຊິ່ງມີຈຸດປະສົງ: 1) ເພື່ອຮູ້ຜົນການດໍາເນີນງານປະກັນຄຸນນະພາບການສຶກສາຂອງໂຮງຮຽນມັດທະຍົມວັດໜອງແຂມ ແລະ 2) ເພື່ອຮູ້ແນວທາງການພັດທະນາການດໍາເນີນງານປະກັນຄຸນນະພາບການສຶກສາຂອງໂຮງຮຽນມັດທະຍົມວັດໜອງແຂມ. ກຸ່ມຕົວຢ່າງ ຄື ຄູ ແລະ ຜູ້ບໍລິຫານໂຮງຮຽນ ຈໍານວນ 123 ຄົນ. ຜົນການຄົ້ນຄວ້າພົບວ່າ: ການດໍາເນີນງານປະກັນຄຸນນະພາບການສຶກສາຂອງໂຮງຮຽນໂດຍພາບລວມຢູ່ໃນລະດັບຫຼາຍທີ່ສຸດ. ຈີລະພັດ ເຫຼືອງວັທະນະວິໄລ (2022) ໄດ້ຄົ້ນຄວ້າກ່ຽວກັບ ບົດບາດຂອງຜູ້ບໍລິຫານກັບການດໍາເນີນງານປະກັນຄຸນນະພາບການສຶກສາພາຍໃນສະຖານສຶກສາ ສັງກັດສໍານັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາການຈະນະບຸຣີ ເຊິ່ງມີຈຸດປະສົງ: 1) ບົດບາດຂອງຜູ້ບໍລິຫານສະຖານສຶກສາ ສັງກັດສໍານັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາການຈະນາບຸຣີ, 2) ການດໍາເນີນງານປະກັນຄຸນນະພາບພາຍໃນສະຖານສຶກສາ ສັງກັດສໍານັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາການຈະນາບຸຣີ ແລະ 3) ຄວາມສໍາພັນລະຫວ່າງບົດບາດຂອງຜູ້ບໍລິຫານກັບການດໍາເນີນງານປະກັນຄຸນນະພາບການສຶກສາພາຍໃນສະຖານສຶກສາສັງກັດສໍານັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາການຈະນາບຸຣີ. ກຸ່ມຕົວຢ່າງຄື: ສະຖານສຶກສາໃນສັງກັດສໍານັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາການ ຈະນາບຸຣີ ຈໍານວນ 128 ແຫ່ງ ມີຜູ້ໃຫ້ຂໍ້ມູນ 112 ຄົນ. ຜົນການຄົ້ນຄວ້າພົບວ່າ: ບົດບາດຂອງຜູ້ບໍລິຫານສະຖານສຶກສາສັງກັດສໍານັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາການຈະນາບຸຣີ ໂດຍພາບລວມຢູ່ໃນລະດັບຫຼາຍທີ່ສຸດ. ນາຣິຍາ ສີພັນ (2021) ໄດ້ຄົ້ນຄວ້າກ່ຽວກັບ ການສຶກສາການມີສ່ວນຮ່ວມໃນການປະກັນຄຸນນະພາບພາຍໃນສະຖານສຶກສາຕາມທັດສະນະຂອງຄູວິທະຍາເຂດໂລ່ມສັກ ສັງກັດສໍານັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາເພັດສະບູນ ເຊິ່ງມີຈຸດປະສົງ: 1) ເພື່ອສຶກສາການມີສ່ວນຮ່ວມໃນການປະກັນຄຸນນະພາບພາຍໃນສະຖານສຶກສາຕາມທັດສະນະຂອງຄູ ແລະ 2) ສຶກສາແນວທາງການມີສ່ວນຮ່ວມໃນການປະກັນຄຸນນະພາບພາຍໃນສະຖານສຶກສາຕາມທັດສະນະຂອງຄູວິທະຍາເຂດໂລ່ມສັກ ສັງກັດສໍານັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາເພັດສະບູນ ກຸ່ມຕົວຢ່າງໄດ້ແກ່ ຄູສອນ ໃນວິທະຍາເຂດໂລ່ມສັກ ປີການສຶກສາ 2021 ຈໍານວນ 159 ຄົນ ຜົນການຄົ້ນຄວ້າພົບວ່າ: ການສຶກສາການມີສ່ວນຮ່ວມໃນການປະກັນຄຸນນະພາບພາຍໃນສະຖານສຶກສາ ໃນພາບລວມຢູ່ໃນລະດັບຫຼາຍ.

## 3. ວິທີດໍາເນີນການຄົ້ນຄວ້າ

ການສຶກສາສະພາບການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາລະດັບມັດທະຍົມສຶກສາຕອນປາຍສົງ ໃນນະຄອນຫຼວງວຽງຈັນ ດໍາເນີນການຄົ້ນຄວ້າ ໂດຍນໍາໃຊ້ການເກັບຂໍ້ມູນແບບປະລິມານຜ່ານແບບສອບຖາມ 5 ລະດັບ, ຈາກນັ້ນນໍາເອົາຜົນຂອງການຄົ້ນຄວ້າມາແປຜົນ ແລະ ສະຫຼຸບລາຍງານ.

### *3.1 ກຸ່ມເປົ້າໝາຍ*

ກຸ່ມເປົ້າໝາຍຂອງການສຶກສາໄດ້ກໍານົດເອົາ: ຜູ້ບໍລິຫານ (ຄະນະອໍານວຍການ), ວິຊາການ, ຄູສອນທີ່ເປັນພໍ່ອອກ ເຊິ່ງກໍາລັງປະຕິບັດໜ້າທີ່ຢູ່ໃນໂຮງຮຽນມັດທະຍົມສຶກສາຕອນປາຍສົງໃນນະຄອນຫຼວງວຽງຈັນ ໃນສົກຮຽນ 2024-2025 ລວມທັງໝົດຈໍານວນ 68 ອົງ/ທ່ານ ເຊິ່ງເປັນພຣະສົງ 33 ອົງ ແລະ ເປັນພໍ່ອອກທີ່ເປັນຄູສອນລວມທັງໝົດ 35 ທ່ານ.

### *3.2 ເຄື່ອງມືທີ່ໃຊ້ໃນການເກັບກໍາຂໍ້ມູນ*

ເຄື່ອງມືທີ່ໃຊ້ຮອບຮອມຂໍ້ມູນໃນໄລຍະນີ້ ຜູ້ຄົ້ນຄວ້າໄດ້ໃຊ້ແບບສອບຖາມ (Questionnaire) ໂດຍແບ່ງເປັນ 3 ຕອນດັ່ງນີ້:

ຕອນທີ 1: ເປັນແບບສອບຖາມກ່ຽວກັບຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ, ຊຶ່ງມີລັກສະນະກວດສອບລາຍການ (Check List).

ຕອນທີ 2: ເປັນແບບສອບຖາມກ່ຽວກັບສະພາບການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາໂຮງຮຽນມັດທະຍົມຕອນປາຍສົງ ໃນນະຄອນຫຼວງວຽງຈັນ ດັ່ງນີ້: (1) ດ້ານຜູ້ຮຽນ ປະກອບດ້ວຍ 8 ຕົວຊີ້ວັດ, (2) ດ້ານການຮຽນ-ການສອນ ປະກອບດ້ວຍ 8 ຕົວຊີ້ວັດ, (3) ດ້ານສະພາບແວດລ້ອມ ປະກອບດ້ວຍ 8 ຕົວຊີ້ວັດ, (4) ດ້ານອຸປະກອນການຮຽນ-ການສອນ ປະກອບດ້ວຍ 8 ຕົວຊີ້ວັດ, (5) ດ້ານການຄຸ້ມຄອງ-ບໍລິຫານ ປະກອບດ້ວຍ 10 ຕົວຊີ້ວັດ, (6) ດ້ານການມີສ່ວນຮ່ວມຂອງຊຸມຊົນ ປະກອບດ້ວຍ 3 ຕົວຊີ້ວັດ, ລັກສະນະຂອງແບບສອບຖາມເປັນແບບມາດຕາສ່ວນປະມານຄ່າ (Rating scale) 5 ລະດັບດັ່ງນີ້:

5 ໝາຍເຖິງ ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາ ຢູ່ໃນລະດັບດີຫຼາຍ

4 ໝາຍເຖິງ ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາ ຢູ່ໃນລະດັບດີ

3 ໝາຍເຖິງ ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາ ຢູ່ໃນລະດັບປານກາງ

2 ໝາຍເຖິງ ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາ ຢູ່ໃນລະດັບອ່ອນ

1 ໝາຍເຖິງ ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາ ຢູ່ໃນລະດັບອ່ອນຫຼາຍ

*3.4 ການວິເຄາະຂໍ້ມູນ*

ຜູ້ຄົ້ນຄວ້າໄດ້ນໍາເອົາຂໍ້ມູນ ມາກວດສອບຄວາມຖືກຕ້ອງ ແລະ ຄົບຖ້ວນສົມບູນ, ແລ້ວນໍາມາລຽງລໍາດັບຂອງແບບສອບຖາມພ້ອມລົງລະຫັດ ແລະ ວິເຄາະທາງສະຖິຕິດ້ວຍຄອມພິວເຕີ ໂດຍການນໍາໃຊ້ໂປຣແກຣມ ສໍາເລັດຮູບ SPSS ແລະ ໄດ້ດໍາເນີນການດັ່ງນີ້:

ຕອນທີ 1: ວິເຄາະຂໍ້ມູນກ່ຽວກັບສະຖານະພາບຂອງຜູ້ຕອບແບບສອບຖາມ ໂດຍການຫາຄ່າຄວາມຖີ່ (Frequency) ແລະ ສ່ວນຮ້ອຍ (Percentage).

ຕອນທີ 2: ວິເຄາະຂໍ້ມູນແບບສອບຖາມກ່ຽວກັບການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາໃນໂຮງຮຽນມັດທະຍົມສຶກສາຕອນປາຍສິງໃນນະຄອນຫຼວງວຽງຈັນ ຕາມອົງປະກອບ 6 ດ້ານຄື: 1) ດ້ານຜູ້ຮຽນ, 2) ດ້ານການຮຽນ-ການສອນ, 3) ດ້ານສະພາບແວດລ້ອມ, 4) ດ້ານອຸປະກອນການຮຽນ-ການສອນ, 5) ດ້ານການຄຸ້ມຄອງ-ບໍລິຫານ ແລະ 6) ດ້ານການມີສ່ວນຮ່ວມຂອງຊຸມຊົນ. ການວິເຄາະໂດຍການໃຊ້ຄ່າທາງສະຖິຕິເພື່ອຊອກຫາຄ່າສະເລ່ຍ (μ) ແລະ ຄ່າຜັນປ່ຽນມາດຖານ (σ) ໂດຍລວມ, ລາຍດ້ານ ແລະ ລາຍຂໍ້. ຈາກນັ້ນ, ນໍາມາທຽບກັບເກນແປຄວາມໝາຍ ໂດຍໃຊ້ເກນແປຜົນຄ່າສະເລ່ຍ 5 ລະດັບ (ບຸນຊົມ ສີສະອາດ, 2556) ດັ່ງນີ້:

4.51-5.00 ໝາຍເຖິງ ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາ ຢູ່ໃນລະດັບດີຫຼາຍ

3.51-4.50 ໝາຍເຖິງ ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາ ຢູ່ໃນລະດັບດີ

2.51-3.50 ໝາຍເຖິງ ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາ ຢູ່ໃນລະດັບປານກາງ

1.51-2.50 ໝາຍເຖິງ ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາ ຢູ່ໃນລະດັບອ່ອນ

1.00-1.50 ໝາຍເຖິງ ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາ ຢູ່ໃນລະດັບອ່ອນຫຼາຍ

## 4. ຜົນການຄົ້ນຄວ້າ

ການຄົ້ນຄວ້າຄັ້ງນີ້ເປັນການຄົ້ນຄວ້າກ່ຽວກັບການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາຂອງໂຮງຮຽນມັດທະຍົມສຶກສາຕອນປາຍສິງ ນະຄອນຫຼວງວຽງຈັນ ໃນຄັ້ງນີ້ມີຜົນໄດ້ຮັບດັ່ງນີ້:

*4. 1 ຜົນການວິເຄາະຂໍ້ມູນສ່ວນຕົວຂອງກຸ່ມເປົ້າໝາຍ*

ຂໍ້ມູນກຸ່ມເປົ້າໝາຍຈໍານວນ 68 ຄົນ ເຊິ່ງສະແດງອອກດັ່ງນີ້:

ຕາຕະລາງ 1: ສະແດງຈໍານວນ ແລະ ສ່ວນຮ້ອຍຂອງຜູ້ຕອບແບບສອບຖາມຈໍາແນກຕາມອາຍຸ, ຕໍາແໜ່ງ, ວຸດທິການສຶກສາ ແລະ ຈໍາແນກຕາມປະສົບການເຮັດວຽກ

| ຂໍ້ມູນທົ່ວໄປ | ຈໍານວນ | ສ່ວນຮ້ອຍ (%) |
|---|---|---|
| **ອາຍຸ** | | |
| ຕໍ່າກວ່າ 25 ປີ | 4 | 5.9 |
| 26-35 ປີ | 28 | 41.2 |
| 36 ປີຂຶ້ນໄປ | 36 | 52.9 |
| **ລວມ** | 68 | 100 |
| **ຕໍາແໜ່ງ** | | |
| ຄະນະອໍານວຍການ | 6 | 8.8 |
| ຄູສອນ | 62 | 91.2 |
| **ລວມ** | 68 | 100 |
| **ວຸດທິການສຶກສາ** | | |
| ຕໍ່າກວ່າປະລິນຍາຕີລົງມາ | 3 | 4.4 |
| ປະລິນຍາຕີ | 42 | 61.8 |
| ປະລິນຍາໂທ | 23 | 33.8 |
| **ລວມ** | 68 | 100 |
| **ປະສົບການເຮັດວຽກ** | | |
| ຕໍ່າກວ່າ 10 ປີ | 13 | 19.1 |
| 10 - 20 ປີ | 33 | 48.5 |
| 20 ປີຂຶ້ນໄປ | 22 | 32.4 |
| **ລວມ** | 68 | 100 |

ຈາກຕາຕະລາງ 1: ພົບວ່າຜູ້ຕອບແບບສອບຖາມສ່ວນຫຼາຍແມ່ນອາຍຸ 36 ປີຂຶ້ນໄປ ເຊິ່ງກວມເອົາ 52.9%, ຮອງລົງມາແມ່ນກຸ່ມຜູ້ທີ່ມີອາຍຸລະຫວ່າງ 26-35 ປີ ເຊິ່ງກວມເອົາ 41.2% ; ເຖິງຢ່າງໃດກໍຕາມ ກຸ່ມທີ່ໃຫ້ຂໍ້ມູນໜ້ອຍກວ່າໝູ່ແມ່ນກຸ່ມຜູ້ທີ່ມີອາຍຸຕໍ່າກວ່າ 25 ປີ ເຊິ່ງກວມເອົາພຽງແຕ່ 5.9%; ໃນດ້ານຕໍາແໜ່ງພົບວ່າຜູ້ຕອບແບບສອບຖາມສ່ວນຫຼາຍແມ່ນຄູສອນ ຈໍານວນ 62 ອົງ/ຄົນ ກວມເອົາ 91.2% ແລະ ຄະນະນອຍການ ຈໍານວນ 6 ອົງ/ຄົນ ກວມເອົາພຽງແຕ່ 8.8%; ໃນດ້ານວຸດທິການສຶກສາພົບວ່າຜູ້ຕອບແບບສອບຖາມສ່ວນຫຼາຍມີລະດັບການສຶກສາໃນລະດັບປະລິນຍາຕີ ເຊິ່ງກວມເອົາ 61.8%; ເຖິງຢ່າງໃດກໍຕາມ ກຸ່ມທີ່ມີລະດັບການສຶກສາໃນລະດັບປະລິນຍາໂທ ແລະຕໍ່າກວ່າປະລິນຍາຕີລົງມາກວມເອົາພຽງແຕ່ 33.8% ແລະ 4.4% ຕາມລໍາດັບ. ໃນດ້ານປະສົບການເຮັດວຽກພົບວ່າຜູ້ຕອບແບບສອບຖາມສ່ວນຫຼາຍແມ່ນປະສົບການເຮັດວຽກລະຫວ່າງ 10 - 20 ປີ ເຊິ່ງກວມເອົາ 48.5%, ຮອງລົງມາແມ່ນປະສົບການເຮັດວຽກ 20 ປີຂຶ້ນໄປ ເຊິ່ງກວມເອົາ 32.4% ເຖິງຢ່າງໃດກໍຕາມ ກຸ່ມທີ່ໃຫ້ຂໍ້ມູນໜ້ອຍກວ່າໝູ່ແມ່ນກຸ່ມຜູ້ທີ່ມີປະສົບການຕໍ່າກວ່າ 10 ປີ ເຊິ່ງກວມເອົາພຽງແຕ່ 19.1%.

*4.2 ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາ*

ຜົນການວິເຄາະຂໍ້ມູນກ່ຽວກັບ ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາຂອງໂຮງຮຽນມັດທະຍົມສຶກສາຕອນປາຍສິງ ນະຄອນຫຼວງວຽງຈັນ ປະກອບດ້ວຍ 6 ດ້ານໄດ້ແກ່: (1) ດ້ານຜູ້ຮຽນ, (2) ດ້ານການຮຽນ-ການສອນ, (3) ດ້ານສະພາບແວດລ້ອມ, (4) ດ້ານອຸປະກອນການຮຽນ-ການສອນ, (5) ດ້ານການຄຸ້ມຄອງ-ບໍລິຫານ ແລະ (6) ດ້ານການມີສ່ວນຮ່ວມຂອງຊຸມຊົນ.

ຕາຕະລາງ 1: ສະແດງຄ່າສະເລ່ຍ ຄ່າຜັນປ່ຽນມາດຕະຖານ ໂດຍພາບລວມ ແລະ ແຕ່ລະດ້ານ

| ລ/ດ | ເນື້ອໃນແຕ່ລະດ້ານ | ຜົນການສຳຫຼວດ | | |
|---|---|---|---|---|
| | | μ | σ | ແປຜົນ |
| 1 | ດ້ານຜູ້ຮຽນ | 4.48 | 0.46 | ດີ |
| 2 | ດ້ານການຮຽນ-ການສອນ | 4.51 | 0.53 | ດີຫຼາຍ |
| 3 | ດ້ານສະພາບແວດລ້ອມ | 4.33 | 0.34 | ດີ |
| 4 | ດ້ານອຸປະກອນການຮຽນ-ການສອນ | 4.06 | 0.36 | ດີ |
| 5 | ດ້ານການຄຸ້ມຄອງ-ບໍລິຫານ | 4.56 | 0.42 | ດີຫຼາຍ |
| 6 | ດ້ານການມີສ່ວນຮ່ວມຂອງຊຸມຊົນ | 4.51 | 0.45 | ດີຫຼາຍ |
| | **ສະເລ່ຍ** | 4.41 | 0.39 | **ດີ** |

ຈາກຕາຕະລາງ 2 ພົບວ່າ ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາຂອງໂຮງຮຽນມັດທະຍົມສຶກສາຕອນປາຍສິງ ນະຄອນຫຼວງວຽງຈັນໂດຍລວມແມ່ນຢູ່ໃນລະດັບດີ ($\mu = 4.41; \sigma = 0.39$). ເມື່ອພິຈາລະນາແຕ່ລະດ້ານພົບວ່າຄ່າສະເລ່ຍຢູ່ໃນລະດັບຫຼາຍກວ່າໝູ່ແມ່ນດ້ານການຄຸ້ມຄອງ-ບໍລິຫານຢູ່ໃນລະດັບດີຫຼາຍ ($\mu = 4.56; \sigma = 0.42$), ຮອງລົງມາໄດ້ແກ່ດ້ານການມີສ່ວນຮ່ວມຂອງຊຸມຊົນ ຢູ່ໃນລະດັບດີຫຼາຍ ($\mu = 4.51; \sigma = 0.45$), ສ່ວນດ້ານທີ່ມີຄ່າສະເລ່ຍໜ້ອຍກ່ວາໝູ່ ແມ່ນດ້ານອຸປະກອນການຮຽນ-ການສອນ ຢູ່ໃນລະດັບດີ ($\mu = 4.06; \sigma = 0.36$).

1) ດ້ານຜູ້ຮຽນ

ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາດ້ານຜູ້ຮຽນໂດຍລວມທັງ 8 ຕົວຊີ້ວັດຢູ່ໃນລະດັບດີ ($\mu = 4.48; \sigma = 0.46$), ເມື່ອພິຈາລະນາແຕ່ລະຕົວຊີ້ວັດພົບວ່າຄ່າສະເລ່ຍຢູ່ໃນລະດັບຫຼາຍກວ່າໝູ່ແມ່ນ ນັກຮຽນສືບຕໍ່ຮຽນຈົນຈົບ ຢູ່ໃນລະດັບດີຫຼາຍ ($\mu = 4.56; \sigma = 0.42$), ຮອງລົງມາໄດ້ແກ່ນັກຮຽນມີການຮັກສາອະນາໄມສ່ວນຕົວດີ ແລະ ມີສຸຂະພາບແຂງແຮງ ຢູ່ໃນລະດັບດີຫຼາຍ ($\mu = 4.54; \sigma = 0.60$), ສ່ວນດ້ານທີ່ມີຄ່າສະເລ່ຍໜ້ອຍກ່ວາໝູ່ ແມ່ນນັກຮຽນໄດ້ຮັບການບໍລິການດ້ານສຸຂະພາບຂັ້ນພື້ນຖານ ແລະ ຄວາມຮູ້ດ້ານໂພຊະນາການ ຢູ່ໃນລະດັບດີ ($\mu = 4.37; \sigma = 0.62$).

2) ດ້ານການຮຽນ-ການສອນ

ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາ ໂດຍລວມທັງ 8 ຕົວຊີ້ວັດຢູ່ໃນລະດັບດີຫຼາຍ ($\mu = 4.51; \sigma = 0.53$), ເມື່ອພິຈາລະນາແຕ່ລະຕົວຊີ້ວັດພົບວ່າຄ່າສະເລ່ຍຢູ່ໃນລະດັບຫຼາຍກວ່າໝູ່ແມ່ນ ຄູສອນມີວຸດທິການສຶກສາທີ່ເໝາະສົມ ຢູ່ໃນລະດັບດີຫຼາຍ ($\mu = 4.66; \sigma = 0.49$), ຮອງລົງມາໄດ້ແກ່ ຄູສອນມີການວັດ-ປະເມີນຜົນການຮຽນ ແລະ ນຳໃຊ້ຜົນໄປປັບປຸງການຮຽນ-ການສອນ ຢູ່ໃນລະດັບດີຫຼາຍ ($\mu = 4.55; \sigma = 0.66$), ສ່ວນດ້ານທີ່ມີຄ່າສະເລ່ຍໜ້ອຍກ່ວາໝູ່ແມ່ນຄູສອນນຳໃຊ້ຫຼັກສູດໃຫ້ແທດເໝາະກັບທ້ອງຖິ່ນ ຢູ່ໃນລະດັບດີ ($\mu = 4.42; \sigma = 0.54$).

3) ດ້ານສະພາບແວດລ້ອມ

ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາ ໂດຍລວມທັງ 8 ຕົວຊີ້ວັດຢູ່ໃນລະດັບດີ ($\mu = 4.33; \sigma = 0.34$), ເມື່ອພິຈາລະນາແຕ່ລະຕົວຊີ້ວັດພົບວ່າຄ່າສະເລ່ຍຢູ່ໃນລະດັບຫຼາຍກວ່າໝູ່ແມ່ນ ໂຮງຮຽນມີອົງປະກອບຈຳເປັນທີ່ເປັນສັນຍາລັກຂອງໂຮງຮຽນ ຢູ່ໃນລະດັບດີຫຼາຍ ($\mu = 4.75; \sigma = 0.43$), ຮອງລົງມາໄດ້ແກ່ ຄູໂຮງຮຽນມີທີ່ຕັ້ງເໝາະສົມ ແລະ ປອດໄພ ຢູ່ໃນລະດັບດີຫຼາຍ ($\mu = 4.61; \sigma = 0.51$), ສ່ວນດ້ານທີ່ມີຄ່າສະເລ່ຍໜ້ອຍກ່ວາໝູ່ແມ່ນໂຮງຮຽນຈັດສະພາບແວດລ້ອມເພື່ອສົ່ງເສີມການອ່ານ ຢູ່ໃນລະດັບປານກາງ ($\mu = 3.49; \sigma = 0.53$).

4) ດ້ານອຸປະກອນການຮຽນ-ການສອນ

ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາ ໂດຍລວມທັງ 8 ຕົວຊີ້ວັດຢູ່ໃນລະດັບດີ ($\mu = 4.06; \sigma = 0.36$), ເມື່ອພິຈາລະນາແຕ່ລະຕົວຊີ້ວັດພົບວ່າຄ່າສະເລ່ຍຢູ່ໃນລະດັບຫຼາຍກວ່າໝູ່ແມ່ນ ຄູສອນມີອຸປະກອນ ການສອນພຽງພໍ ຢູ່ໃນລະດັບດີຫຼາຍ ($\mu = 4.62; \sigma = 0.48$), ຮອງລົງມາໄດ້ແກ່ໂຮງຮຽນມີອຸປະກອນການສຶກສາພຽງພໍ ຢູ່ໃນລະດັບດີຫຼາຍ ($\mu = 4.60; \sigma = 0.54$), ສ່ວນດ້ານທີ່ມີຄ່າສະເລ່ຍໜ້ອຍກ່ວາໝູ່ແມ່ນໂຮງຮຽນມີອຸປະກອນທົດລອງພື້ນຖານຟີຊິກສາດ, ເຄມີສາດ, ຊີວະສາດ ແລະ ນຳໃຊ້ຢ່າງເໝາະສົມ ຢູ່ໃນລະດັບປານກາງ ($\mu = 2.77; \sigma = 0.55$).

5) ດ້ານຄຸ້ມຄອງ-ບໍລິຫານ

ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາ ໂດຍລວມທັງ 10 ຕົວຊີ້ວັດຢູ່ໃນລະດັບດີຫຼາຍ ($\mu = 4.56; \sigma = 0.42$), ເມື່ອພິຈາລະນາແຕ່ລະຕົວຊີ້ວັດພົບວ່າຄ່າສະເລ່ຍຢູ່ໃນລະດັບຫຼາຍກວ່າໝູ່ແມ່ນ ຜູ້ອຳນວຍການມີຄວາມຮູ້ ແລະ ປະສົບການທີ່ເໝາະສົມ ຢູ່ໃນລະດັບດີຫຼາຍ ($\mu = 4.68; \sigma = 0.38$), ຮອງລົງມາໄດ້ແກ່ ໂຮງຮຽນຕິດຕາມການປະຕິບັດຫຼັກສູດເປັນປົກກະຕິ ຢູ່ໃນລະດັບດີຫຼາຍ ($\mu = 4.67; \sigma = 0.41$), ສ່ວນດ້ານທີ່ມີຄ່າສະເລ່ຍໜ້ອຍກ່ວາໝູ່ແມ່ນໂຮງຮຽນສົ່ງເສີມສິດສະເໝີພາບລະຫວ່າງຍິງ-ຊາຍໃນການຈັດຕັ້ງ ແລະ ເຄື່ອນໄຫວກິດຈະກຳຕ່າງໆຢູ່ໃນລະດັບດີ ($\mu = 4.41; \sigma = 0.60$).

6) ດ້ານການມີສ່ວນຮ່ວມຂອງຊຸມຊົນ

ການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາ ໂດຍລວມທັງ 3 ຕົວຊີ້ວັດຢູ່ໃນລະດັບດີຫຼາຍ ($\mu = 4.51$; $\sigma = 0.45$), ເມື່ອພິຈາລະນາແຕ່ລະຕົວຊີ້ວັດພົບວ່າຄ່າສະເລ່ຍຢູ່ໃນລະດັບຫຼາຍກວ່າໝູ່ແມ່ນ ໂຮງຮຽນສົ່ງເສີມການຮ່ວມມືກັບຊຸມຊົນ ຢູ່ໃນລະດັບດີຫຼາຍ ($\mu = 4.61$; $\sigma = 0.54$), ຮອງລົງມາໄດ້ແກ່ ຊຸມຊົນມີສ່ວນຮ່ວມໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາໂຮງຮຽນ ຢູ່ໃນລະດັບດີຫຼາຍ ($\mu = 4.54$; $\sigma = 0.53$), ສ່ວນດ້ານທີ່ມີຄ່າສະເລ່ຍໜ້ອຍກ່ວາໝູ່ແມ່ນຊຸມຊົນມີສ່ວນຮ່ວມໃນການຈັດກິດຈະກຳເຄື່ອນໄຫວຕ່າງໆຂອງໂຮງຮຽນຢູ່ໃນລະດັບດີ ($\mu = 3.38$; $\sigma = 0.47$).

## 5. ອະພິປາຍຜົນ

ຈາກຜົນຂອງການສຶກສາໄລຍະທີ 1 ເພື່ອສຶກສາສະພາບການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາຂອງໂຮງຮຽນມັດທະຍົມສຶກສາສິງຕອນປາຍ ນະຄອນຫຼວງວຽງຈັນ ໃນ 6 ດ້ານຄື: ດ້ານຜູ້ຮຽນ, ດ້ານການຮຽນ-ການສອນ, ດ້ານສະພາບແວດລ້ອມ, ດ້ານອຸປະກອນການຮຽນ-ການສອນ, ດ້ານການຄຸ້ມຄອງ-ບໍລິຫານ ແລະ ດ້ານການມີສ່ວນຮ່ວມຂອງຊຸມຊົນ. ຈາກຜົນຂອງການຄົ້ນຄວ້າ ພົບວ່າໂດຍລວມມີການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາຂອງໂຮງຮຽນມັດທະຍົມສຶກສາສິງຕອນປາຍໃນລະດັບດີຫາດີຫຼາຍໃນ 6 ດ້ານ ເຊິ່ງເຫັນວ່າມີຄວາມສອດຄ່ອງກັບເກນການປະຕິບັດມາດຖານການປະກັນຄຸນນະພາບຂອງການສຶກສາສາມັນ ຂອງກະຊວງສຶກສາທິການ ແລະ ກິລາ (2016) ທີ່ນໍາມາປັບໃຊ້ໃນການປະກັນຄຸນນະພາບຂອງການສຶກສາສາມັນສິງ. ເຖິງຢ່າງໃດກໍຕາມ, ເມື່ອພິຈາລະນາແລ້ວ ເຫັນວ່າຍັງມີບາງຈຸດທີ່ເປັນສິ່ງທ້າທາຍໃນການປະຕິບັດມາດຖານການປະກັນຄຸນນະພາບຂອງການສຶກສາສາສິງ ເຊັ່ນ: ດ້ານສະພາບແວດລ້ອມ ແລະ ດ້ານອຸປະກອນການຮຽນ-ການສອນ ເມື່ອພິຈາລະນາແລ້ວເຫັນວ່າດ້ານສະພາບແວດລ້ອມມີສະພາບບັນຫາຢູ່ລະດັບປານກາງເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ ຂໍ້ຈໍາກັດທາງດ້ານການໃຫ້ບໍລິການຫ້ອງສະໝຸດ, ການໃຫ້ບໍລິການຫ້ອງທົດລອງ (ວິຊາຟີຊິກສາດ, ເຄມີສາດ ແລະ ຊີວະສາດ) ການໃຫ້ບໍລິການຫ້ອງ ICT ແລະ ການປັບປຸງຫໍຂ່າວຂອງໂຮງຮຽນ ທີ່ເຫັນວ່າຍັງບໍ່ທັນເປັນໄປຕາມມາດຖານການປະກັນຄຸນນະພາບ ແລະ ຕ້ອງໄດ້ຮັບການປັບປຸງແກ້ໄຂ. ບັນຫາທີ່ກ່າວມານີ້ສອດຄ່ອງກັບຜົນຂອງການຄົ້ນຄວ້າຂອງ ອຸ່ນລາ ພາວົງໄຊ (2018) ທີ່ຊີ້ໃຫ້ເຫັນວ່າບັນຫາທີ່ພົບເຫັນແມ່ນຕິດພັນກັບພື້ນຖານໂຄງລ່າງ ແລະ ສິ່ງອໍານວຍຄວາມສະດວກ ເປັນຕົ້ນແມ່ນຫ້ອງທົດລອງ ແລະ ຫ້ອງ ICT. ນອກຈາກນັ້ນ ສີຈັນ ພົມມະຈັກ (2016) ຍັງໄດ້ເນັ້ນໃຫ້ເຫັນອີກວ່າ ສິ່ງຄວນເອົາໃຈໃສ່ໃນການປະຕິບັດມາດຖານການປະກັນຄຸນນະພາບ ນອກຈາກການສະໜອງພື້ນຖານໂຄງລ່າງ ແລະ ສິ່ງອໍານວຍຄວາມສະດວກ ຍັງຕ້ອງໄດ້ຄໍານຶງເຖິງການຕິດຕາມປະເມີນຜົນ ແລະ ການບູລະນະຮັກສາໃຫ້ເກີດຄວາມຍືນຍົງອີກດ້ວຍ ແລະ ຜົນການຄົ້ນຄວ້າຂອງ ດາຣາພອນ ໄຊຍະສີທາ (2009) ໄດ້ສຶກສາການດໍາເນີນງານການປະກັນຄຸນນະພາບການສຶກສາຂອງມະຫາວິທະຍາໄລມະຫາສາລະຄາມຕາມເກນມາດຕະຖານການສຶກສາລະດັບອຸດົມສຶກສາ ໂດຍສະເພາະແມ່ນດ້ານສະພາບແວດລ້ອມ ນອກຈາກນັ້ນໃນດ້ານອຸປະກອນການຮຽນ-ການສອນ ກໍຍັງເຫັນວ່າມີສະພາບບັນຫາໃນລະດັບປານກາງ ແລະ ຜົນການຄົ້ນຄວ້າຂອງ ສຸປຣານີ ວິຂະຣັງສັນ (2010) ໄດ້ສຶກສາກ່ຽວກັບການຈັດການຄຸນນະພາບການສຶກສາໂຮງຮຽນເອກະຊົນໃນເຂດພື້ນທີ່ການສຶກສາສະມຸດປຣາການ ເຂດ 1 ໂດຍສະເພາະແມ່ນດ້ານສະພາບແວດລ້ອມ ນອກຈາກນັ້ນໃນດ້ານອຸປະການການຮຽນ-ການສອນກໍຍັງເຫັນວ່າມີສະພາບບັນຫາໃນລະດັບປານກາງ

## 6. ສະຫຼຸບຜົນ

ຜົນການສຶກສາການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາຂອງໂຮງຮຽນມັດທະຍົມສຶກສາຕອນປາຍສິງນະຄອນຫຼວງວຽງຈັນ ຜູ້ຕອບແບບສອບຖາມມີຄວາມຄິດເຫັນຕໍ່ກັບການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາລະດັບມັດທະຍົມສຶກສາສິງຕອນປາຍ ໃນນະຄອນຫຼວງວຽງຈັນ ໂດຍລວມຢູ່ໃນລະດັບດີ. ເມື່ອພິຈາລະນາແຕ່ລະດ້ານພົບວ່າຄ່າສະເລ່ຍຢູ່ໃນລະດັບດີຫາດີຫຼາຍ ໃນນັ້ນດ້ານທີ່ມີຄ່າສະເລ່ຍສູງກວ່າໝູ່ແມ່ນດ້ານການຄຸ້ມຄອງ-ບໍລິຫານ, ຮອງລົງມາໄດ້ແກ່ດ້ານການມີສ່ວນຮ່ວມຂອງຊຸມຊົນ, ສ່ວນດ້ານທີ່ມີຄ່າສະເລ່ຍໜ້ອຍກ່ວາໝູ່ ແມ່ນດ້ານອຸປະກອນການຮຽນ-ການສອນ.

## 7. ຂໍ້ຈໍາກັດ

ຜ່ານການຄົ້ນຄວ້າຕົວຈິງ ເຫັນໄດ້ວ່າບົດຄົ້ນຄວ້າທີ່ກ່ຽວຂ້ອງພາຍໃນ ແລະ ຕ່າງປະເທດຍັງມີຈໍາກັດ, ຈຶ່ງເຮັດໃຫ້ຂໍ້ມູນໃນການອະພິປາຍຜົນ ຍັງມີລັກສະນະຈໍາກັດ ໃນການຄົ້ນຄວ້າຄັ້ງນີ້ແມ່ນໄດ້ເກັບກໍາຂໍ້ມູນຈາກຄູສອນຢູ່ໃນ 2 ໂຮງຮຽນໃນນະຄອນຫຼວງວຽງຈັນ ໃນໄລຍະເວລາຈໍາກັດ ແມ່ນມີຄວາມຫຍຸ້ງຍາກໃນການປະສານງານ.

## 8 ຂໍ້ສະເໜີແນະ

ສະເໜີໃຫ້ຄະນະອໍານວຍການເປັນເຈົ້າການໃນການວາງແຜນ ແລະ ຈັດຕັ້ງປະຕິບັດການປັບປຸງສະພາບແວດ ແລະ ອຸປະການການຮຽນ-ການສອນ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ການສຶກສາໃນຄັ້ງຕໍ່ໄປຄວນເພີ່ມຂະໜາດກຸ່ມຕົວຢ່າງໃຫ້ກວມເອົາທົ່ວທຸກໂຮງຮຽນໃນທົ່ວທຸກແຂວງ ເພື່ອປຽບທຽບສະພາບການປະຕິບັດມາດຕະຖານການປະກັນຄຸນນະພາບການສຶກສາຂອງແຕ່ລະບ່ອນເພື່ອຮັບຮູ້ແນວທາງໃນການແກ້ໄຂ ຫຼື ໃນການປັບປຸງຄຸນນະພາບການສຶກສາໃນອະນາຄົດ.

## 9. ເອກະສານອ້າງອີງ

ກະຊວງສຶກສາທິການ ແລະ ກິລາ. (2016). *ມາດຕະຖານຄຸນນະພາບການສຶກສາ ສຳລັບ ຊັ້ນມັດທະຍົມສຶກສາ.* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ. (2022). *ແຜນພັດທະນາພາກສຶກສາ 2021-2025.* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ ແລະ ກິລາ.

ຈິລະພັດ ເຫຼືອງວັທນະວິໄລ. (2022). *ບົດບາດຂອງຜູ້ບໍລິຫານກັບການດຳເນີນງານປະກັນຄຸນນະພາບການສຶກສາພາຍໃນສະຖານສຶກສາ ສັງກັດສຳນັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາການຈະນາບຸຣີ.* ການຈະນນາບຸລີ: ມະຫາວິທະຍາໄລສິລປາກອນ.

ສິຈັນ ພິມມະຈັກ. (2016). *ບັນຫາຄວາມກຽມພ້ອມໃນການປະກັນຄຸນນະພາບການສຶກສາພາຍໃນໂຮງຮຽນມັດທະຍົມສຶກສາຕອນປາຍ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ (ວິທະຍານິພົນ ລະດັບປະລິນຍາໂທ)* . ນະຄອນຫຼວງວຽງຈັນ: ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ.

ສຸປຣານີ ວິຂະຣັງສັນ. (2010). *ການຈັດການຄຸນນະພາບການສຶກສາໂຮງຮຽນເອະຊົນໃນເຂດພື້ນທີ່ການສຶກສາສະມຸດປຣາການ ເຂດ1.* ສະມຸດປຣາການ: ມະຫາວິທະຍາໄລທຸລະກິດບັນດິດ.

ສຳນັກງານສະຖິຕິລາວ. (2021). *ບົດລາຍງານຕົວຊີ້ວັດການສຶກສາ.* ນະຄອນຫຼວງວຽງຈັນ: ສຳນັກງານສະຖິຕິລາວ.

ດາຣາພອນ ໂຊຍະສິທາ. (2009). *ການດຳເນີນການປະກັນຄຸນນະພາບການສຶກສາຂອງມະຫາວິທະຍາໄລມະຫາສາຣະຄາມຕາມເກນມາດຕະຖານການສຶກສາລະດັບອຸດົມສຶກສາ.* ມະຫາສາຣະຄາມ: ມະຫາວິທະຍາໄລສາຣະຄາມ.

ນາຣິຍາ ສີພັນ. (2021). *ການສຶກສາການມີສ່ວນຮ່ວມໃນການປະກັນຄຸນນະພາບພາຍໃນສະຖານສຶກສາຕາມທັດສະນະຂອງຄູວິທະຍາເຂດໂລ່ມສັກ ສັງກັດສຳນັກງານເຂດພື້ນທີ່ການສຶກສາມັດທະຍົມສຶກສາເພັດສະບູນ.* ມະຫາວິທະຍາໄລນາເຣສວນ: ມະຫາວິທະຍາໄລນາເຣສວນ.

ບຸນຊົມ ສີສະອາດ. (2556). *ວິໄຈເບື້ອງຕົ້ນ (ສະບັບປັບປຸງ).* ກຸງເທບ: ສຸວິຣິຍາສານ.

ມະຍຸຣີ ອໍລະວັນ. (2020). *ແນວທາງການພັດທະນາການດຳເນີນງານປະກັນຄຸນນະພາບການສຶກສາຂອງໂຮງຮຽນມັດທະຍົມວັດໜອງແຂມ.* ກຸງເທບມະຫານະຄອນ: ມະຫາວິທະຍາໄລສິລະປາກອນ.

ລະດາວັນ ຕັ້ງມັ່ນ. (2018). *ການດຳເນີນການປະກັນຄຸນນະພາບພາຍໃນສະຖານສຶກສາ ສັງກັດເຂດພື້ນທີ່ການສຶກສາມັດທະຍົມສຶກສາເຂດ 4 ຈັງວັດປະທຸມທານີ.* ປະທຸມທານີ: ມະຫາວິທະຍາໄລເທັກໂນໂລຢີ ຣາຊະມົງຄຸນທັນຍະບຸຣີ.

ຫ້ອງການກຳມາທິການສຶກສາສິງ. (2025). *ບົດສະຫຼຸບປະຈຳປີ 2024-2025 ແລະ ແຜນການຈັດຕັ້ງປະຕິບັດປະຈຳປີ 2025-2026.* ນະຄອນຫຼວງວຽງຈັນ: ຫ້ອງການກຳມະທິການສຶກສາສິງ ນະຄອນຫຼວງວຽງຈັນ.

ອຸ່ນລາ ພາວົງໄຊ. (2018). *ການປະຕິບັດມາດຕະຖານປະກັນຄຸນນະພາບຂອງໂຮງຮຽນມັດທະຍົມສຶກສາພາກເອກະຊົນ 4 ເມືອງໃນ ຂອງນະຄອນຫຼວງວຽງຈັນ (ວິທະຍານິພົນ ລະດັບປະລິນຍາໂທ).* ນະຄອນຫຼວງວຽງຈັນ: ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ.

Phommalath, K. a. (2020). Challenges in Improving the Quality of Secondary Education in Laos. *Journal of Southeast Asian Education 12(3)*, 45-48.